ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2074 /ອຄ.

ນະຄອນຫລວງວຽງຈັນ, ວັນທີ 19 ຕຸລາ 2010.

# ຂໍ້ຕົກລົງ

## ວ່າດ້ວຍມາດຕະຖານ ໂຮງງານອຸດສາຫະກຳປຸງແຕ່ງເຫລັກ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/99/ສພຊ, ລົງວັນທີ່ 3/4/99.
- ອີງຕາມດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 67/ນຍ, ລົງວັນທີ່ 12/4/06.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 188/ນຍ, ລົງວັນທີ່ 17/8/06.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ໝວດທີ I
### ຫລັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ ໂດຍສະເພາະດ້ານທີ່ຕັ້ງໂຮງງານ, ອາຄານຜະລິດ, ເຄື່ອງຈັກ, ຂະບວນການຜະລິດ, ເຕັກນິກວິຊາການ, ຄວາມປອດໄພ, ສຸຂະອະນາໄມ ແລະ ສິ່ງແວດລ້ອມໂຮງງານ. ແນໃສ່ເພີ່ມທັດສະນະ ຄຸ້ມຄອງໂຮງງານ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ. ດ້ານໜຶ່ງ, ເພື່ອເຮັດໃຫ້ການເຄື່ອນໄຫວກິດຈະການໂຮງງານ ມີຄວາມເປັນລະບຽບຮຽບຮ້ອຍດີ, ທັງເປັນການຊຸກຍູ້ສົ່ງເສີມຜະລິດຕະພັນຂອງໂຮງງານ ໃຫ້ມີຄຸນນະພາບ ແລະ ມີມາດຕະຖານດີ.

**ມາດຕາ 2. ຄວາມໝາຍຂອງໂຮງງານອຸດສາຫະກຳປຸງແຕ່ງເຫລັກ**

ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ເປັນປະເພດໂຮງງານທີ່ກຳນົດໄວ້ໃນ ຂໍ້ 14 ແລະ 15, ມາດຕາ 9 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ໝາຍເຖິງ ໂຮງງານທີ່ນຳໃຊ້ວັດຖຸດິບ ເຊັ່ນ: ແຮ່ເຫລັກ, ເຫລັກແທ່ງ, ເຫລັກເສດ ເປັນຕົ້ນຕໍ ເຂົ້າຜ່ານຂະບວນການປຸງແຕ່ງ ປ່ຽນຈາກສະພາບເດີມມາເປັນຜະລິດຕະພັນເຫລັກ ດ້ວຍການນຳໃຊ້ເຄື່ອງຈັກ ແລະ ແຮງງານຄົນຢູ່ພາຍໃນໂຮງງານ, ຊຶ່ງຜະລິດຕະພັນເຫຼົ່ານັ້ນສາມາດເອົາໄປຈຳໜ່າຍເປັນສິນຄ້າໄດ້. ໂຮງງານດັ່ງກ່າວໄດ້ຈັດເຂົ້າໃນເລກລະຫັດ 2410, 2431, 2511, 2512, 2591, 2592, 2593 ແລະ 2599 ຂອງການຈັດປະເພດອຸດສາຫະກຳສາກົນ ( ISIC, International Standard for Industrial Classification ).

ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ເພື່ອການດັດລົມ, ຄຸ້ມຄອງ ແລະ ສົ່ງເສີມ ການເຄື່ອນໄຫວກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ທຸກປະເພດ ແລະ ທຸກຂະໜາດ ຕາມມາດຕາ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ໃນຂອບເຂດທົ່ວປະເທດ.

ມາດຕາ 4. ປະເພດໂຮງງານອຸດສາຫະກຳປຸງແຕ່ງເຫລັກ

ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ແມ່ນປະເພດໂຮງງານປຸງແຕ່ງເຫລັກ ທີ່ເປັນແບບອຸດສາຫະກຳ ໂດຍນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ແລະ ນຳໃຊ້ເຄື່ອງຈັກເປັນຕົ້ນຕໍເຂົ້າໃນຂະບວນການຜະລິດ ເຊັ່ນ: ຂັ້ນຕອນການຫລອມ, ການຫລໍ່, ການເຜົາ, ການຂູບ, ການໜີບ, ການຣີດ, ການພັບ, ການຕັດ, ການເຈາະ, ການຊຸ່ງນ, ການຂັດ, ການຍຶກຍໍ ແລະອື່ນໆ.

## ໝວດທີ II

## ມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ

ມາດຕາ 5. ມາດຕະຖານດ້ານທີ່ຕັ້ງໂຮງງານ

ໂຮງງານອຸດສາຫະກຳປຸງແຕ່ງເຫລັກທຸກປະເພດ ແລະ ທຸກຂະໜາດ ຕ້ອງຕັ້ງຢູ່ສະຖານທີ່ກວ້າງຂວາງ, ບໍລິເວນໂຮງງານຕ້ອງມີເນື້ອທີ່ພຽງພໍ ແລະ ເໝາະສົມກັບກິດຈະການ, ເສັ້ນທາງເຂົ້າ-ອອກຕ້ອງກວ້າງຂວາງ ບໍ່ກີດຂວາງການສັນຈອນ, ບໍ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂຮງງານຕ້ອງຕັ້ງຢູ່ຫ່າງໄກຈາກເຂດຊຸມຊົນແອອັດ, ຫ່າງໄກຈາກສະຖານທີ່ຫວງຫ້າມທາງການ ເຊັ່ນ: ໂຮງຮຽນ, ໂຮງໝໍ, ວັດວາອາຮາມ... ຢ່າງນ້ອຍ 1.000 ແມັດ ແລະ ປະຕິບັດຖືກຕ້ອງຕາມລະບຽບການປຸກສ້າງທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

ໂຮງງານອຸດສາຫະກຳປຸງແຕ່ງເຫລັກທຸກປະເພດ ແລະ ທຸກຂະໜາດ ຕ້ອງປະກອບມີ: ຫ້ອງການບໍລິຫານ, ອາຄານປຸງແຕ່ງເຫລັກ, ສາງວັດຖຸດິບ ແລະ ຜະລິດຕະພັນ, ຈັດໃຫ້ມີສິ່ງອຳນວຍຄວາມສະດວກໃຫ້ແກ່ຄົນງານ ເຊັ່ນ: ບ່ອນຈອດລົດ, ບ່ອນພັກຜ່ອນຄົນງານ, ຫ້ອງນ້ຳ ແລະ ອື່ນໆ ທີ່ຈຳເປັນ ແລະ ຕ້ອງມີລະບົບໄຟຟ້າ ທີ່ຮັບປະກັນຄວາມປອດໄພ ແລະ ມີລະບົບນ້ຳໃຊ້ຢ່າງພຽງພໍ.

ມາດຕາ 6. ມາດຕະຖານດ້ານອາຄານໂຮງງານ

ອາຄານໂຮງງານອຸດສາຫະກຳປຸງແຕ່ງເຫລັກທຸກປະເພດ ແລະ ທຸກຂະໜາດ ຕ້ອງກ້ວາງຂວາງເໝາະສົມກັບຂະບວນການປຸງແຕ່ງ, ໂຄງສ້າງຕ້ອງແໜ້ນໜາແຂງແຮງ, ເສົາເຮັດດ້ວຍເບຕົງ ຫລື ເສົາເຫລັກ, ພື້ນເຮັດດ້ວຍເບຕົງ, ມຸງດ້ວຍກະເບື້ອງ ຫລື ສັງກະສີ; ຄວາມສູງແຕ່ພື້ນຫາເພດານ 4,50 ແມັດຂຶ້ນໄປ, ໂດຍໄດ້ຮັບອະນຸຍາດ ແລະ ກໍ່ສ້າງຖືກຕ້ອງ ຕາມລະບຽບການກ່ຽວກັບການຄຸ້ມຄອງການປຸກສ້າງ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

ມາດຕາ 7. ມາດຕະຖານດ້ານເຄື່ອງຈັກ

ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ຕ້ອງຕິດຕັ້ງເຄື່ອງຈັກ, ເຄື່ອງມືອຸປະກອນທີ່ຈຳເປັນຕົ້ນຕໍຈຳນວນໜຶ່ງຕາມຄວາມເໝາະສົມຄືດັ່ງນີ້: ເຄື່ອງຈັກຕັດ, ເຄື່ອງຈັກໜີບ, ເຄື່ອງຈັກຣີດເຫລັກເສັ້ນ (ປ້ອງອ້ອຍ ຫລື ກົມກ້ຽງ), ເຄື່ອງຈັກ ພັບເຫລັກຮູບປະພັນອື່ນໆ (ເຫລັກທໍ່ກົມ, ທໍ່ຫລ່ຽມ...), ເຄື່ອງຈັກຈອດ, ເຄື່ອງຈັກ

ເຈາະ, ເຄື່ອງຈັກເຈັຍ, ເຄື່ອງຈັກຊຸ່ມ, ເຄື່ອງຈັກຂັດ, ເຄື່ອງຈັກເລື່ອຍ, ເຄື່ອງຈັກຍົກ (ເຄຣນ), ເຕົາຫລອມ, ເບົ້າຫລໍ່, ເຕົາເຜົາ, ອ່າງເຄືອບເຫລັກ, ອ່າງຊຸບເຫລັກ ແລະ ເຄື່ອງຈັກອື່ນໆ.

ບັນດາເຄື່ອງຈັກດັ່ງກ່າວ ຕ້ອງເປັນເຄື່ອງຈັກໃໝ່ 100% ແລະ ຕ້ອງຕິດຕັ້ງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ເປັນລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ ແລະ ມີຄວາມປອດໄພໃນເວລານຳໃຊ້.

ມາດຕາ 8. ມາດຕະຖານດ້ານການຜະລິດ

ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ຕ້ອງຈັດໃຫ້ມີຂະບວນການຜະລິດ ແລະ ການປຸງແຕ່ງ ໃຫ້ເປັນລະບົບຕ່ອງໂສ້ທີ່ບໍ່ສັບສົນ, ເໝາະສົມ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

ມາດຕາ 9. ມາດຕະຖານດ້ານວິຊາການເຕັກນິກ ແລະ ຄົນງານ

ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ຕ້ອງປະກອບມີບຸກຄະລາກອນທີ່ມີຄຸນນະວຸດທິ ແລະ ສອດຄ່ອງກັບແຕ່ລະຕຳແໜ່ງງານ, ຕ້ອງມີວິຊາການວິຊາສະເພາະທີ່ມີໃບປະກາສະນີຍະບັດ ຫລື ໃບຢັ້ງຢືນຮັບຮອງດ້ານເຕັກນິກວິຊາການທີ່ຖືກຕ້ອງປະຈຳຢູ່ໂຮງງານ. ໃນນີ້, ວິຊາການເຕັກນິກ ແລະ ຄົນງານ ຕ້ອງໄດ້ຜ່ານການຝຶກອົບຮົມ ແລະ ຍົກລະດັບທາງດ້ານວິຊາການ ຢ່າງເປັນປະຈຳ.

ໃນກໍລະນີ ມີພະນັກງານ ວິຊາການ ຫລື ຄົນງານຕ່າງປະເທດ ເຂົ້າມາເຮັດວຽກປະຈຳຢູ່ໃນໂຮງງານ ຕ້ອງໄດ້ຂໍອະນຸຍາດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 10. ມາດຕະຖານດ້ານຄວາມປອດໄພ, ສຸຂະອະນາໄມໂຮງງານ

1. ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ຕ້ອງມີໜ່ວຍງານບໍລິຫານຄວາມປອດໄພ ປະຈຳໂຮງງານ ເພື່ອແນະນຳດ້ານຄວາມປອດໄພໃຫ້ແກ່ຄົນງານຜູ້ທີ່ເຮັດວຽກໃນສະຖານທີ່ທີ່ມີຄວາມສ່ຽງສູງ ແລະ ຕິດຕາມກວດກາດ້ານອຸປະຕິເຫດແຮງງານ ປະຈຳວັນ. ໃນກໍລະນີເກີດອຸປະຕິເຫດ ມີຜູ້ບາດເຈັບ ຫລື ເສັຍຊີວິດ ຢູ່ພາຍໃນໂຮງງານ ຕ້ອງແຈ້ງ ແລະ ລາຍງານຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຊາບທັນທີ.

2. ຕ້ອງຕິດຕັ້ງລະບົບປ້ອງກັນຄວາມປອດໄພ ໃນການນຳໃຊ້ໄຟຟ້າ ເຊັ່ນ: ລະບົບໄຟຟ້າເຄື່ອງຈັກ, ໄຟຟ້າແສງສະຫວ່າງ ແລະ ອື່ນໆ.

3. ຕ້ອງຕິດຕັ້ງເຄື່ອງປ້ອງກັນອັນຕະລາຍຈາກເຄື່ອງຈັກ ເຊັ່ນ: ປ້າຍເຕືອນ, ປ້າຍຫ້າມໃສ່ສະຖານທີ່ທີ່ເປັນອັນຕະລາຍ ແລະ ພ້ອມທັງມີແຜນການບຳລຸງຮັກສາເຄື່ອງຈັກ ອຸປະກອນ ເປັນປະຈຳ.

4. ຕ້ອງຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ພາຍໃນໂຮງງານໃຫ້ພຽງພໍ ເຊັ່ນ: ລະບົບສັນຍານເຕືອນໄພ, ບັ້ງດັບເພີງ ຫລື ລະບົບນ້ຳມອດໄຟ ແລະ ສາມາດນຳໃຊ້ໄດ້.

5. ຕ້ອງປະກອບອຸປະກອນປ້ອງກັນຝຸ່ນ, ຄວັນ, ແສງ, ສຽງ, ຄວາມຮ້ອນ, ເຄມີ... ຊຶ່ງໃນນັ້ນ ຕ້ອງມີອຸປະກອນປິດປາກ, ປິດດັງ, ປິດຫູ, ເຄື່ອງກັນແສງ, ກັນຄວາມຮ້ອນ, ເກີບ, ໝວກ, ສົບມື... (ຂຶ້ນກັບແຕ່ລະຂອດງານ) ແລະ ຊຸດເຄື່ອງນຸ່ງເຮັດວຽກຂອງຄົນງານ.

6. ຕ້ອງຕິດຕັ້ງລະບົບແສງສະຫວ່າງ, ການລະບາຍອາກາດໃຫ້ພຽງພໍ ແລະ ເໝາະສົມກັບຂອດງານການຜະລິດຢູ່ພາຍໃນໂຮງງານ.

7. ຕ້ອງຈັດໃຫ້ມີນ້ຳດື່ມສະອາດ, ຕູ້ຢາສຸກເສີນ, ຫ້ອງນ້ຳ, ຫ້ອງປ່ຽນເຄື່ອງນຸ່ງ, ບ່ອນພັກຜ່ອນ, ບ່ອນຮັບປະທານອາຫານຂອງຄົນງານ ໃຫ້ພຽງພໍຕາມຄວາມເໝາະສົມ.

ມາດຕາ 11. ມາດຕະຖານດ້ານສິ່ງແວດລ້ອມໂຮງງານ

1. ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕ້ອງມີໃບຢັ້ງຢືນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຫລື ແຜນຄຸ້ມຄອງສິ່ງແວດລ້ອມໂຮງງານ ຈາກຂະແໜງການອຸດສາຫະກຳ ແລະການຄ້າ ຕາມຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1222/ອຫ, ລົງວັນທີ 7/12/05 ຈຶ່ງກໍ່ສ້າງໂຮງງານໄດ້.

2. ຕ້ອງມີລະບົບບຳບັດ ຫລື ລະບົບກຳຈັດ ສິ່ງເສດເຫລືອຈາກໂຮງງານ ເຊັ່ນ: ເສດຂີ້ເຫລັກ, ຝຸ່ນ, ຄວັນ, ສຽງ, ນ້ຳເປື້ອນ, ນ້ຳເສັຍຄຸນ ແລະ ອື່ນໆ.

3. ຕ້ອງມີໜ່ວຍງານຄຸ້ມຄອງສິ່ງແວດລ້ອມປະຈຳຢູ່ໂຮງງານ.

## ໝວດທີ III
## ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງເຫລັກ

ມາດຕາ 12. ເງື່ອນໄຂຂອງການດຳເນີນກິດຈະການໂຮງງານ

ໂຮງງານອຸດສາຫະກຳປຸງແຕ່ງເຫລັກທຸກປະເພດ ແລະ ທຸກຂະໜາດ ຕ້ອງຂຶ້ນທະບຽນວິສາຫະກິດ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ, ຂຶ້ນທະບຽນອາກອນພາຍໃນ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ຕ້ອງຂໍອະນຸຍາດດຳເນີນກິດຈະການ ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 13. ການດັດສົມໂຮງງານ

1. ໂຮງງານອຸດສາຫະກຳປຸງແຕ່ງເຫລັກທຸກປະເພດ ແລະ ທຸກຂະໜາດ ທີ່ຍັງບໍ່ທັນໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານ ຕ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07 ແລະ ປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

2. ໂຮງງານອຸດສາຫະກຳປຸງແຕ່ງເຫລັກທຸກປະເພດ ແລະ ທຸກຂະໜາດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການໂຮງງານມາກ່ອນ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ແຕ່ມາດຕະຖານໂຮງງານຍັງບໍ່ທັນຄົບຖ້ວນຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຕ້ອງປະຕິບັດໃຫ້ຄົບຖ້ວນ ແລະ ຖືກຕ້ອງທຸກປະການ.

3. ໂຮງງານອຸດສາຫະກຳປຸງແຕ່ງເຫລັກທຸກປະເພດ ແລະ ທຸກຂະໜາດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການໂຮງງານແລ້ວນັ້ນ ສາມາດເຕົ້າໂຮມກັນເປັນກຸ່ມໂຮງງານ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 14. ການສ້າງແຜນການຜະລິດຂອງໂຮງງານ

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງເຫລັກ ທຸກປະເພດ ແລະ ທຸກຂະໜາດ ຕ້ອງສ້າງແຜນການຜະລິດ ແລະ ແຜນການຈຳໜ່າຍປະຈຳປີຂອງໂຮງງານ ຕາມແຈ້ງການເລກທີ 663/ອຄ, ລົງວັນທີ 08/10/08 (ອ1-ອ7) ແລະ ຕາມລະບຽບການຂອງກະຊວງອຸດສາຫະກຳ ແລະ ການຄ້າ ວາງອອກ ໂດຍຜ່ານການກວດກາ ແລະ ຢັ້ງຢືນ ຈາກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ

ກ່ອນວັນທີ່ 15 ເດືອນມັງກອນ ຂອງທຸກໆປີ ແລະ ພ້ອມທັງສະຫລຸບລາຍງານ ຜົນການຈັດຕັ້ງປະຕິບັດແຜນການຂອງປີຜ່ານມາ ແລະ ແຜນ ການຂອງປີຕໍ່ໄປ.

### ມາດຕາ 15. ດ້ານວັດຖຸດິບ

ການນໍາໃຊ້ວັດຖຸດິບທຸກປະເພດ ເຊັ່ນ: ແຮ່ເຫລັກ, ວັດຖຸດິບນໍາເຂົ້າ, ເຫລັກເສດ ແລະ ອື່ນໆ ຕ້ອງປະຕິບັດຖືກຕ້ອງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 16. ດ້ານຜະລິດຕະພັນ

ຜະລິດຕະພັນເຫລັກສໍາເລັດຮູບ ໂຮງງານຕ້ອງມີກາໝາຍສະເພາະຂອງໂຮງງານ, ຕ້ອງມີມາດຕະຖານໃດໜຶ່ງທີ່ຖືກຕ້ອງຕາມລະບຽບການທາງດ້ານມາດຕະຖານຂອງປະເທດ, ພາກພື້ນ, ສາກົນ ແລະ ລະບຽບການສະເພາະທີ່ກ່ຽວຂ້ອງແຕ່ລະໄລຍະ ແລະ ຕ້ອງໄດ້ຮັບການຢັ້ງຢືນດ້ານຄຸນນະພາບ ແລະ ມາດຕະຖານ ຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບການ ໂດຍສະເພາະ ດ້ານຂະໜາດ, ນໍ້າໜັກ ແລະ ອື່ນໆ.

## ໝວດທີ IV

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 17. ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງເຫລັກ ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບການຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ມີຜົນງານດີເດັ່ນ ໃນການປຸງແຕ່ງເປັນຜະລິດຕະພັນສໍາເລັດຮູບທີ່ໄດ້ມາດຕະຖານ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ຈະໄດ້ຮັບການພິຈາລະນາສົ່ງເສີມ ຕາມທີ່ກໍານົດໄວ້ໃນມາດຕາ 3 ຂອງດໍາລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ເລກທີ 67/ນຍ, ລົງວັນທີ່ 12/4/06 ແລະ ຈະໄດ້ຮັບການພິຈາລະນາຍ້ອງຍໍຕາມມາດຕາ 52 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ.

### ມາດຕາ 18. ມາດຕະການຕໍ່ຜູ້ລະເມີດ

ຜູ້ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງເຫລັກ ຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກໍາປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07 ຢ່າງເຂັ້ມງວດ ຕາມແຕ່ລະກໍລະນີ ຄື:

1). ຄັ້ງທີ ໜຶ່ງ: ຖືກກ່າວເຕືອນ ແລະ ສຶກສາອົບຮົມ ຕາມມາດຕາ 24.

2). ຄັ້ງທີ ສອງ: ຖືກປັບໃໝ ແລະ ໃຊ້ແທນຄ່າເສັຍຫາຍ ຕາມມາດຕາ 25, 26.

3). ຄັ້ງທີ ສາມ: ຖືກປັບໃໝ ແລະ ປະຕິບັດມາດຕະການທາງອາຍາ ຕາມມາດຕາ 27 ແລະ ສັ່ງປິດກິດຈະການໂຮງງານໂດຍບໍ່ມີເງື່ອນໄຂຕໍ່ລອງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 19. ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ເປັນຜູ້ຊີ້ນຳ, ຕິດຕາມ ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບກັບລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ.

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ມີໜ້າທີ່ເຜີຍແຜ່ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ ໄດ້ຮັບຜົນດີ ແລະ ເຂັ້ມງວດ.

### ມາດຕາ 20. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ລະບຽບການ ແລະ ແຈ້ງການ ກ່ຽວກັບໂຮງງານອຸດສາຫະກຳປຸງແຕ່ງເຫລັກ ທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ໃຫ້ນຳໃຊ້ຂໍ້ຕົກລົງສະບັບນີ້ປ່ຽນແທນ.

ລ/ຍ ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ຫຼວງພະບາງ ສະແຫວງສຶກສາ